ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 45/ນຍ

ນະຄອນຫຼວງວຽງຈັນ, ວັນທີ 11 / 04 / 25

# ຂໍ້ຕົກລົງ
# ວ່າດ້ວຍການເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນ ຂອງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ (ສະບັບປັບປຸງ) ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ສະບັບເລກທີ 39/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ເອກະສານສະເໜີ ຂອງທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 20/ທຫລ, ລົງວັນທີ 07 ກຸມພາ 2025.

## ນາຍົກລັດຖະມົນຕີ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອຜັນຂະຫຍາຍມາດຕາ 13 ຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ສະບັບເລກທີ 39/ສພຊ, ລົງວັນທີ 17 ກໍລະກົດ 2023.

**ມາດຕາ 2 ການເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນ**

ໃຫ້ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ໄດ້ຮັບການສ້າງຕັ້ງຂຶ້ນກ່ອນກົດໝາຍ ວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ສະບັບເລກທີ 39/ສພຊ, ລົງວັນທີ 17 ກໍລະກົດ 2023, ໃຫ້ເພີ່ມທຶນຈົດທະບຽນ ໃຫ້ຄົບຈຳນວນ ໜຶ່ງພັນຕື້ (1,000,000,000,000) ກີບ ຂຶ້ນໄປ ແລະ ເພີ່ມເງິນລົງທຶນ ໃຫ້ສາຂາທະນາຄານທຸລະກິດຕ່າງປະເທດ ໃຫ້ຄົບຈຳນວນຫົກຮ້ອຍຕື້ (600,000,000,000) ກີບຂຶ້ນໄປ ຕາມທີ່ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍສະບັບດັ່ງກ່າວ ພາຍໃນເວລາ ສິບປີ ນັບແຕ່ວັນທີ 02 ມິຖຸນາ 2025 ເປັນຕົ້ນໄປ. ໃນນັ້ນ, ໃນໄລຍະ ຫ້າປີ ທຳອິດ ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນ ຢ່າງໜ້ອຍ ສາມສິບສ່ວນຮ້ອຍ (30%) ຂອງຈຳນວນທຶນທີ່ຕ້ອງເພີ່ມ.

ສຳລັບທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ມີຄວາມພຽງພໍຂອງທຶນ ຕໍ່າກວ່າລະດັບຕາມລະບຽບການທີ່ທະນາຄານ ແຫ່ງ ສປປ ລາວ ວາງອອກ ໃຫ້ທະນາຄານດັ່ງກ່າວ ເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນ ຂອງຕົນ ເພື່ອແກ້ໄຂຄວາມພຽງພໍຂອງທຶນ ໃຫ້ສຳເລັດພາຍໃນເວລາ ສາມປີ ແລະ ຄຽງຄູ່ກັນນັ້ນ ຕ້ອງສ້າງແຜນເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນຕໍ່າສຸດຂອງຕົນ ຕາມທີ່ກຳນົດໄວ້ໃນວັກທີ 1 ຂອງມາດຕານີ້.

**ມາດຕາ 3 ແຜນການເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນ**

ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງສ້າງແຜນເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນຂອງຕົນ ສອດຄ່ອງຕາມມາດຕາ 2 ຂອງຂໍ້ຕົກລົງສະບັບນີ້ ທີ່ໄດ້ຜ່ານການຮັບຮອງ ໂດຍກອງປະຊຸມຜູ້ຖືຮຸ້ນ ຫຼື ຜູ້ມີສິດອຳນາດທີ່ກ່ຽວຂ້ອງຂອງສຳນັກງານໃຫຍ່ ແລ້ວສະເໜີກົມຄຸ້ມຄອງທະນາຄານທຸລະກິດ, ທະນາຄານ ແຫ່ງ ສປປ ລາວ ເພື່ອພິຈາລະນາຮັບຮອງຂັ້ນສຸດທ້າຍ ພາຍໃນເວລາ ເກົ້າສິບວັນ ນັບແຕ່ວັນທີ່ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້. ເມື່ອກົມຄຸ້ມຄອງທະນາຄານທຸລະກິດ ຮັບຮອງເອົາແຜນດັ່ງກ່າວແລ້ວ ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງປະຕິບັດຕາມແຜນການດັ່ງກ່າວ ຢ່າງເຂັ້ມງວດ.

**ມາດຕາ 4 ຮູບການເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນ**

ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ສາມາດເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນຂອງຕົນ ດ້ວຍຮູບການ ດັ່ງນີ້:

1. ຜູ້ຖືຮຸ້ນ ຫຼື ສຳນັກງານໃຫຍ່ ນຳເງິນຂອງຕົນ ມາເພີ່ມທຶນໃຫ້;
2. ນຳເອົາກຳໄລສຸດທິໃນປີ ຫຼື ກຳໄລສະສົມ ມາເພີ່ມທຶນໄດ້ ໂດຍໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
3. ຫັນໜີ້ສິນຂອງຕົນ ເປັນທຶນຈົດທະບຽນ ຫຼື ເງິນລົງທຶນ;
4. ປັບປຸງໂຄງສ້າງຜູ້ຖືຮຸ້ນ ດ້ວຍການເພີ່ມຈຳນວນຮຸ້ນ ແລ້ວໃຫ້ຜູ້ລົງທຶນລາຍໃໝ່ເຂົ້າມາຊື້ຮຸ້ນ ໃນຮູບແບບບໍລິສັດ ຈຳກັດ ຫຼື ບໍລິສັດມະຫາຊົນ;
5. ຮູບການອື່ນ ຕາມການອະນຸຍາດ ຂອງທະນາຄານ ແຫ່ງ ສປປ ລາວ.

**ມາດຕາ 5 ການບັນທຶກບັນຊີ ແລະ ການນຳໃຊ້ທຶນຈົດທະບຽນ ແລະ ເງິນລົງທຶນ**

ໃນການເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນ ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງໂອນເຂົ້າບັນຊີທຶນຂອງຕົນ ທີ່ເປີດໄວ້ຢູ່ທະນາຄານ ແຫ່ງ ສປປ ລາວ. ໃນກໍລະນີການເພີ່ມທຶນເປັນເງິນຕາຕ່າງປະເທດ ແມ່ນສາມາດບັນທຶກບັນຊີທຶນຈົດທະບຽນ ໄດ້ສອງທາງເລືອກ ດັ່ງນີ້:

1) ບັນທຶກບັນຊີທຶນຈົດທະບຽນ ເປັນສະກຸນເງິນກີບ ຕາມອັດຕາແລກປ່ຽນຂອງທະນາຄານ ແຫ່ງ ສປປ ລາວ ໃນວັນທີທະນາຄານ ແຫ່ງ ສປປ ລາວ ຮັບຮອງການເພີ່ມທຶນດັ່ງກ່າວ ແລະ ສາມາດຖືເງິນຕາຕ່າງປະເທດສະກຸນດັ່ງກ່າວ ໄວ້ໃນເບື້ອງຊັບສິນຂອງທະນາຄານ (ເງິນຝາກບັນຊີທຶນຈົດທະບຽນ ຢູ່ທະນາຄານ ແຫ່ງ ສປປ ລາວ) ແລະ ສາມາດບໍ່ນຳເອົາເງິນຕາຕ່າງປະເທດຈຳນວນດັ່ງກ່າວ ມາຄິດໄລ່ຖານະເງິນຕາຕ່າງປະເທດຂອງຕົນ;

2) ບັນທຶກບັນຊີທຶນຈົດທະບຽນ ເປັນສະກຸນເງິນຕາຕ່າງປະເທດ ໂດຍທຽບເທົ່າກີບ ຕາມອັດຕາແລກປ່ຽນຂອງທະນາຄານ ແຫ່ງ ສປປ ລາວ ໃນວັນທີ່ທະນາຄານ ແຫ່ງ ສປປ ລາວ ຮັບຮອງການເພີ່ມທຶນດັ່ງກ່າວ ຊຶ່ງຈຳນວນທຶນຈົດທະບຽນທຽບເທົ່າກີບ ຈະປ່ຽນແປງຕາມການເໜັງຕີງຂອງອັດຕາແລກປ່ຽນ ໃນແຕ່ລະໄລຍະ. ທະນາຄານ ສາມາດຖືເງິນຕາຕ່າງປະເທດສະກຸນດັ່ງກ່າວ ໄວ້ໃນເບື້ອງຊັບສິນຂອງທະນາຄານ (ເງິນ

ຝາກບັນຊີທຶນຈົດທະບຽນ ຢູ່ທະນາຄານ ແຫ່ງ ສປປ ລາວ) ແລະ ສາມາດບໍ່ນໍາເອົາເງິນຕາຕ່າງປະເທດຈໍານວນດັ່ງກ່າວ ມາຄິດໄລ່ຖານະເງິນຕາຕ່າງປະເທດ ຂອງຕົນ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກໍານົດລະບຽບການ ກ່ຽວກັບການເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນ ເປັນເງິນຕາຕ່າງປະເທດ ຂອງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ.

ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງຂໍອະນຸຍາດນໍາໃຊ້ເງິນທຶນຈົດທະບຽນ ແລະ ເງິນລົງທຶນ ຂອງຕົນ ຕາມລະບຽບການທີ່ທະນາຄານ ແຫ່ງ ສປປ ລາວ ກໍານົດ. ສໍາລັບທຶນຈົດທະບຽນ ແລະ ເງິນລົງທຶນ ທີ່ເປັນເງິນຕາຕ່າງປະເທດນັ້ນ ທະນາຄານ ສາມາດຂໍອະນຸຍາດນໍາເອົາເງິນດັ່ງກ່າວໄປສະໜອງສິນເຊື່ອ ຫຼື ລົງທຶນໃນຊັບສິນອື່ນເປັນເງິນຕາຕ່າງປະເທດໄດ້. ກໍລະນີທະນາຄານຈະນໍາເງິນດັ່ງກ່າວໄປສະໜອງສິນເຊື່ອ ຫຼື ລົງທຶນໃນຊັບສິນອື່ນເປັນເງິນກີບ ແມ່ນໃຫ້ທະນາຄານ ແຫ່ງ ສປປ ລາວ ຊື້ເອົາເງິນຕາຕ່າງປະເທດຂອງທະນາຄານ ແລ້ວເບີກຖອນເງິນກີບໃຫ້ແກ່ທະນາຄານດັ່ງກ່າວ.

**ມາດຕາ 6 ການຈັດຕັ້ງປະຕິບັດ**

ມອບໃຫ້ທະນາຄານ ແຫ່ງ ສປປ ລາວ ເປັນເຈົ້າການໃນການຜັນຂະຫຍາຍຂໍ້ຕົກລົງສະບັບນີ້ ພ້ອມທັງຕິດຕາມ, ກວດກາ ການຈັດຕັ້ງປະຕິບັດແຜນການເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນ ຂອງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ໃຫ້ສອດຄ່ອງກັບຂໍ້ຕົກລົງສະບັບນີ້.

ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ແລະ ພາກສ່ວນກ່ຽວຂ້ອງ ມີໜ້າທີ່ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 7 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

**ສອນໄຊ ສີພັນດອນ**